ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ກະຊວງໂຍທາທິການ ແລະ ຂົນສົ່ງ**
ລັດວິສາຫະກິດການບິນລາວ

----005
ເລກທີ............../ກບລ.
ທີ່ນະຄອນຫຼວງວຽງຈັນ, ວັນທີ.02 AUG 2019

**ລະບຽບກ່ຽວກັບການປະມູນ**
**ເຄື່ອງດື່ມ ເພື່ອບໍລິການເທິງເຮືອບິນຂອງການບິນລາວ**

**ພາກທີ່ I :** ເງື່ອນໄຂລວມ

1. ລັດວິສາຫະກິດການບິນລາວ ມີສຳນັກງານຕັ້ງຢູ່ ບ້ານເມືອງວາທົ່ງ ເມືອງ ສີໂຄດຕະບອງ ນະຄອນຫຼວງວຽງຈັນ ມີຄວາມຍິນ ດີແຈ້ງມາຍັງ ບັນດາບໍລິສັດ ຫຼື ວິສາຫະກິດ ແລະ ຮ້ານຂາຍເຄື່ອງ ທີ່ມີຄວາມສົນໃຈທີ່ຈະເຂົ້າຮ່ວມການແຂ່ງຂັນປະມູນ ສະໜອງເຄື່ອງດື່ມເພື່ອບໍລິການເທິງເຮືອບິນຂອງການບິນລາວ.
2. ບໍລິສັດ ຫຼື ວິສາຫະກິດ, ຫ້າງຮ້ານ ທີ່ສົນໃຈເຂົ້າຮ່ວມການແຂ່ງຂັນປະມູນ ສອບຖາມໄດ້ດ້ວຍຕົນເອງຄື:
   - ນະຄອນຫຼວງວຽງຈັນ Tel: (+856 21) 513152

– ວັນທີ **14/08/2019 ເວລາ 09:00** ໂມງເປັນມື້ເປີດຊອງປະມູນ ຢູ່ທີ່ຫ້ອງປະຊຸມ ສຳນັກງານໃຫ່ຍ ລັດວິສາຫະກິດການບິນລາວ (ສຳນັກງານໃຫ່ຍ ລັດວິສາຫະກິດການບິນລາວສະໜາມບິນສາກົນວັດໄຕ ຊັ້ນ 4)

– ໃຫ້ບໍລິສັດ ຫຼື ວິສາຫະກິດ ແລະ ຫ້າງຮ້ານ ທີ່ເຂົ້າຮ່ວມການແຂ່ງຂັນປະມູນ ຖືຊອງປະມູນມາດ້ວຍຕົນເອງ;ພ້ອມທັງແບບຢ່າງ(ອີງໃສ່ເນື້ອໃນເອກະສານເບີ02)ໃຫ້ນຳມາສະເໜີເພື່ອເປັນແບບຢ່າງໃນວັນເປີດຊອງປະມູນ.

**ພາກທີ່ II : ຂໍ້ດແນະນຳສຳລັບຜູ້ເຂົ້າຮ່ວມປະມູນ.**

1. **ເງື່ອນໄຂ**

- ບໍລິສັດ,ວິສາຫະກິດແລະຫ້າງຮ້ານທີ່ເຂົ້າຮ່ວມການປະມູນສະໜອງ**ເຄື່ອງດື່ມບໍລິການເທິງເຮືອບິນ(ເບີ02)** .

1 ບໍລິສັດ, ວິສາຫະກິດ ຫຼື ຫ້າງຮ້ານ ທີ່ໄດ້ຂຶ້ນທະບຽນຢ່າງຖືກຕ້ອງຕາມລະບຽບ ແລະ ກົດໝາຍ.

2 ມີປະຫັວດການເຄື່ອນໄຫວ ຂອງບໍລິສັດ, ວິສາຫະກິດ ຫຼື ຫ້າງຮ້ານ ຢ່າງຕໍ່ເນື່ອງ ແລະ ສາມາດສະໜອງເຄື່ອງອຸປະກອນຮັບໃຊ້.

3 ມີສະຖານທີ່ຕັ້ງຂອງສຳນັກງານ, ສະຖານທີ່ຕັ້ງຂອງຮ້ານ ທີ່ແນ່ນອນ, ມີພາຫະນະນຳສົ່ງ.

4 ສາມາດສະໜອງ ອຸປະກອນ ຕາມວັນເວລາທີ່ຕ້ອງການ.

2. **ເອກະສານປະມູນ**

1. ໃບສະເໜີເຂົ້າຮ່ວມປະມູນ (ມີຢູ່ໃນຊອງປະມູນ).
2. ໃບອະນຸຍາດດຳເນີນທຸລະກິດ ຫຼື ທະບຽນ ວິສາຫະກິດ (ສະບັບສຳເນົາ).
3. ໃບທະບຽນອາກອນ ປີ 2018 (ສະບັບສຳເນົາ)
4. ໃບຢັ້ງຢືນຖານະການເງິນ.
5. ໃບປະກາດ ຫຼື ໃບຢັ້ງຢືນ ຂອງວິຊາການ (ສະບັບສຳເນົາ).
6. ໃບປະເມີນລາຄາທີ່ຈ້າກາຂອງບໍລິສັດ ຫຼື ວິສາຫະກິດ ທຸກໆໜ້າ
7. ປະຫວັດຜົນງານຜ່ານມາ.

**ໝາຍເຫດ:** ເອກະສານຕ້ອງຈັດລຽງຕາມລຳດັບຂ້າງເທິງນີ້.

III. **ສະກຸນເງິນ**

ການປະເມີນລາຄາ ຕ້ອງເປັນສະກຸນເງິນກີບ.

IV. **ການເປີດຊອງປະມູນ**

ຊອງປະມູນແມ່ນບໍລິສັດ, ວິສາຫະກິດ ແລະ ຫ້າງຮ້ານ ເປັນຜູ້ຖືເຂົ້າມາດ້ວຍຕົນເອງ ໃນວັນ ແລະ ເວລາຕາມແຈ້ງການປະມູນ.

V. **ການຕັດສິນເອົາຜູ້ຊະນະການປະມູນ**

- ຄະນະກຳມະການປະມູນສະຫງວນສິດໃນການປະກາດຜູ້ຊະນະການປະມູນໃນວັນເປີດຊອງປະມູນ.
- ຄະນະກຳມະການປະມູນຈະແຈ້ງຜົນການປະມູນໃຫ້ ຜູ້ຊະນະ ແລະ ຜູ້ບໍ່ຊະນະການປະມູນເປັນລາຍລັກອັກສອນພາຍໃນ 05 ວັນນັບແຕ່ມື້ເປີດ ຊອງປະມູນເປັນຕົ້ນໄປ.

VI. **ເງື່ອນໄຂການເຊັນສັນຍາ.**

a. ພາຍຫຼັງທີ່ຜູ້ຊະນະການປະມູນໄດ້ຮັບແຈ້ງການ ຕ້ອງເຂົ້າມາເຊັນສັນຍານຳເຈົ້າຂອງໂຄງການ ພາຍໃນ 07 ວັນ ຕາມວັນລັດທະການ.

b. ພາຍຫຼັງເຊັນສັນຍາແລ້ວໃຫ້ນຳເອົາສັນຍາໄປຈົດທະບຽນນຳສຳນັກງານທະບຽນສານ ສ້າງພາຍໃນ 20 ວັນ, ຖ້າກາຍກຳນົດດັ່ງກ່າວຈະຖືກຕັດສິດ ແລະ ຍົກເລີກສັນຍາ. ສ່ວນຄ່າທຳນຽມຜູ້ຊະນະການປະມູນເປັນຜູ້ຮັບຜິດຊອບ.

ຜູ້ອຳນວຍການ

ບໍລິສັດ ລັດວິສາຫະກິດການບິນລາວ LAO AIRLINES

**ບຸນມາ ຈັນທະວົງສາ**